# 👏👏ຊົມເຊີຍ BCEL ໄດ້ຮັບລາງວັນ ການເງິນສາກົນ ປະຈຳປີ 2024🎉🎉🎊

# 👏👏BCEL Receives the 2024 International Finance Award 🎉🎉🎊

ໃນວັນທີ 14 ຕຸລາ 2024 ທີ່ຜ່ານມາ, ທຄຕລ ໄດ້ຮັບການປະກາດລາຍຊື່ເປັນຜູ້ຊະນະ ໃນການເຂົ້າຊີງລາງວັນການເງິນສາກົນ ສາຂາ The Most Innovative Digital Bank – Laos 2024 ຜ່ານຊ່ອງທາງ ເວັບໄຊທ໌ທາງການຂອງ International Finance Award ເຊິ່ງເປັນທະນາຄານແຫ່ງດຽວຂອງ ສປປ ລາວ ທີ່ໄດ້ຮັບລາງວັນຈາກວາລະສານການເງິນສາກົນ.

On October 14, 2024, Banque pour le Commerce Exterieur Lao (BCEL) was announced as the winner of the "Most Innovative Digital Bank – Laos 2024" award. This recognition, communicated through the official website of the International Finance Award, marks BCEL as the only bank in the Lao People's Democratic Republic (PDR) to receive such an accolade from the International Finance.




ລາງວັນດັ່ງກ່າວໄດ້ຈາກ ການນຳສະເໜີ ການບໍລິການແອັບ BCEL One (Mobile Banking Application) ເຂົ້າຊີງລາງວັນ ເນື່ອງຈາກຜະລິດຕະພັນດັ່ງກ່າວ ເປັນການໃຫ້ບໍລິການຊຳລະສະສາງທີ່ມີຄວາມຫຼາກຫຼາຍ, ທັນສະໄໝ, ວ່ອງໄວ ແລະ ສາມາດກວດສອບໄດ້ຕະຫຼອດເວລາ ໂດຍສະເພາະແມ່ນການຊຳລະສະສາງຜ່ານ QR Code OnePay ຂອງ ທຄຕລ ທີ່ບໍ່ພຽງແຕ່ສາມາດຮອງຮັບການຊຳລະສະສາງຈາກທະນາຄານອື່ນໆພາຍໃນປະເທດ, ແຕ່ຍັງສາມາດຮອງຮັບການຊຳລະຈາກຕ່າງປະເທດໄດ້ເຊັ່ນກັນ ບໍ່ວ່າຈະເປັນ ປະເທດໄທ, ເກົາຫຼີໃຕ້, ຫວຽດນາມ ແລະ ຈີນ ກໍ່ສາມາດຊຳລະຜ່ານ QR Code OnePay ຂອງ ທຄຕລ ໄດ້ເຊັ່ນກັນ. ປະຈຸບັນ BCEL One ໄດ້ມີການພັດທະນາອັບເກຣດໃໝ່ ເພື່ອສິ່ງທີ່ເໜືອກວ່າ ມິຕິໃໝ່ທາງການເງິນ ຄວບຄຸມທຸກຄວາມຕ້ອງການໄວ້ໃນ 1 ດຽວດ້ວຍ One Bank Tap ທີ່ຕອບໂຈດທຸກຄວາມຕ້ອງການ, ການຈັດການທາງການເງິນຮູບແບບໃໝ່

ກັບຟັງຊັນທີ່ຫຼາກຫຼາຍກ່ອນເກົ່າ ບໍ່ວ່າຈະເປັນຟັງຊັນທີ່ສາມາດເປີດບັນຊີໄດ້ດ້ວຍຕົນເອງພາຍໃນແອັບ, ສາມາດຄວບຄຸມການນຳໃຊ້ວົງເງິນ ແລະ ຕິດຕາມການເຄື່ອນໄຫວບັນຊີ, ຟັງຊັນ E-Cheque ໃບຢັ້ງຢືນການຊຳລະສະສາງຮູບແບບໃໝ່ ແລະ ຟັງຊັນ One-Eye ຄວບຄຸມບັດອອນລາຍ ເປີດ-ປິດບັດ ໄດ້ງ່າຍທຸກທີ່ທຸກເວລາ.... ທຸກທຸລະກຳຄົບຈົບໃນ One Bank.

The award was granted in recognition of the BCEL One mobile banking application, which offers a wide range of modern, efficient, and verifiable payment services. Notably, BCEL's QR Code OnePay facilitates not only domestic transactions but also international payments from countries including Thailand, South Korea, Vietnam, and China. The BCEL One application has been significantly upgraded to encompass a comprehensive financial management experience, branded as "One Bank Tap," which addresses all user needs. This innovative platform includes features such as self-account opening within the app, financial limit control, transaction tracking, an E-Cheque function for payment verification, and the One-Eye function for managing online cards, allowing users to activate or deactivate cards at their convenience. One Bank (All You Can Bank On)

ລາງວັນອັນຊົງກຽດທີ່ ທຄຕລ ໄດ້ຮັບໃນເທື່ອນີ້ ເປັນສິ່ງທີ່ຢັ້ງຢືນເຖິງຄຸນນະພາບໃນການບໍລິການ ແລະ ການຍອມຮັບທັງພາຍໃນ ແລະ ສາກົນຕໍ່ ທຄຕລ ໄດ້ເປັນຢ່າງດີ. ການສະເໜີຊື່ທະນາຄານເພື່ອເຂົ້າຮັບລາງວັນ ແລະ ການຕັດສິນ ແມ່ນພິຈາລະນາໂດຍຄະນະກຳມະການ ທີ່ມາຈາກບັນດາບໍລິສັດກວດສອບຈາກພາຍໃນ ແລະ ພາຍນອກ. ເຊິ່ງມີຫຼາຍກວ່າ 100 ທະນາຄານ ຈາກ 30 ປະເທດ ສະເໜີຊື່ເຂົ້າຊິງລາງວັນໃນຄັ້ງນີ້.

This prestigious award underscores BCEL's commitment to service quality and its recognition on both domestic and international stages. The nomination and selection process involved a committee comprising internal and external auditing professionals, with over 100 banks from 30 countries participating in the competition.